**ມິຊຊາອາທິດທີ 18 ກຳນົດທຳມະດາ**

**ວັນທີ 31 ກໍລະກົດ 2022**



**ພຣະວໍລະສານໂດຍນັກບຸນລູກາ 12, 13-21**

ມີຄົນຜູ້ໜຶ່ງໃນຝູງຊົນທູນພຣະອົງວ່າ: ພຣະອາຈານເອີຍ, ຂໍບອກອ້າຍຂ້ານ້ອຍປັນມໍລະດົກໃຫ້ຂ້ານ້ອຍດ້ວຍ. ພຣະອົງຊົງຕອບວ່າ: ທ້າວເອີຍ! ໃຜຕັ້ງເຮົາເປັນຜູ້ຕັດສິນຄວາມ ແລະເປັນຜູ້ແບ່ງປັນມໍລະດົກໃຫ້ພວກເຈົ້າ? ແລ້ວພຣະອົງກ່າວກັບຝູງຊົນວ່າ: ຈົ່ງລະວັງຢ່າເປັນຄົນໂລບໂລພາ ຍ້ອນວ່າມະນຸດຈະຮັ່ງມີສີສຸກກໍຕາມ ຊີວິດຂອງເຂົາກໍບໍ່ສຸດແຕ່ນຳສັບສົມບັດນັ້ນດອກ.

ພຣະອົງຍັງກ່າວຄວາມປຽບທຽບນີ້ໃຫ້ພວກເຂົາຟັງວ່າ: ເສດຖີຜູ້ໜຶ່ງໄດ້ໝາກຜົນອຸດົມຈາກໄຮ່ນາຂອງຕົນຈຶ່ງຄິດໃນໃຈວ່າ: ຂ້ອຍຈະເຮັດແນວໃດ ຍ້ອນວ່າບໍ່ມີບ່ອນຈະມ້ຽນພືດຜົນເຫລົ່ານີ້? ແລ້ວເຂົາເວົ້າວ່າ: ຄິດອອກແລ້ວ, ຂ້ອຍຈະມ້າງສາງເກົ່າ, ປຸກສາງໃໝ່ໃຫ້ໃຫຍ່ກວ່າອີກແລ້ວຈະຂົນເຂົ້າສາລີແລະຂອງຕ່າງໆຂຶ້ນມ້ຽນໄວ້ຢູ່ສາງນັ້ນ. ຂ້ອຍຈະເວົ້າກັບຕົວເອງວ່າ: ດຽວນີ້ມີສັບສົມບັດເກັບໄວ້ກິນກຸ້ມຫລາຍປີແລ້ວ. ຈົ່ງພັກຜ່ອນ, ຈົ່ງກິນ, ຈົ່ງດື່ມແລະມ່ວນຊື່ນຍິນດີຕາມໃຈມັກເຖີດ. ແຕ່ພຣະເປັນເຈົ້າກ່າວກັບເຂົາວ່າ: ຄົນໂງ່ເອີຍ! ຄືນນີ້ເອງເຂົາຈະເອົາວິນຍານເຈົ້າໄປ. ແລະສິ່ງທີ່ເຈົ້າໄດ້ສະສົມໄວ້ນັ້ນຈະຕົກເປັນຂອງໃຜ? ຜູ້ໃດທ້ອນໂຮມສັບສົມບັດໃຫ້ຮັ່ງມີເພື່ອຕົວເອງ ບໍ່ແມ່ນເພື່ອພຣະເປັນເຈົ້າ, ກໍຈະເປັນດັ່ງນີ້ແລ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ວາຈາພຣະເຈົ້າວັນອາທິດນີ້ລ້ວນແຕ່ເຊື້ອເຊີນພວກເຮົາໃຫ້ຊອກສະແຫວງຫາຊັບສົມບັດຢູ່ສະຫວັນ ບໍ່ແມ່ນຢູ່ໃນໂລກນີ້. ເພາະຊັບສົມບັດຢູ່ສະຫວັນເປັນສິ່ງຖາວອນບໍ່ສູນເສຍເປັນ, ສ່ວນຊັບສົມບັດຢູ່ໃນໂລກນີ້ເປັນສິ່ງຊົ່ວຄາວແລະວັນໜຶ່ງກໍຕ້ອງສູນເສຍໄປ. ຍິ່ງໄປກວ່ານັ້ນ, ເມື່ອພວກເຮົາຈາກໂລກນີ້ໄປແລ້ວ, ເຖິງວ່າພວກເຮົາຈະມີຊັບສິນມະຫາສານປານໃດກໍຕາມ, ແຕ່ພວກເຮົາບໍ່ສາມາດເອົາໄປນຳໄດ້ຈັກຢ່າງເລີຍ. ດ້ວຍເຫດນີ້, ໂກເອແລັດໃນບົດອ່ານທີໜຶ່ງຂອງວັນນີ້ຈຶ່ງກ່າວວ່າ: "ທຸກສິ່ງໃນໂລກນີ້ລ້ວນແຕ່ເປັນອະນິຈັງ". ມີແຕ່ສິ່ງດຽວເທົ່ານັ້ນທີ່ໝັ້ນຄົງຖາວອນນັ້ນຄື ຄວາມສະຫລາດ. ແຕ່ຄວາມສະຫລາດນີ້ບໍ່ໄດ້ມາຈາກໂລກ, ແຕ່ມາຈາກສະຫວັນ. ແລະຄວາມສະຫລາດນີ້ແມ່ນອົງພຣະເຢຊູກຣິສໂຕເຈົ້ານັ້ນເອງ. ດ້ວຍເຫດນີ້, ນັກບຸນເປົາໂລໃນບົດອ່ານທີສອງຂອງວັນນີ້ຈຶ່ງກ່າວກັບກຸ່ມກຣິສຕະຊົນຢູ່ເມືອງໂກໂຣຊາ ກໍຄືກ່າວກັບພວກເຮົາວ່າ: ອາໄສສິນລ້າງບາບ, ພວກເຮົາໄດ້ເກີດໃໝ່ໃນພຣະເຢຊູກຣິສໂຕເຈົ້າ. ຄົນເກົ່າອັນແມ່ນຄົນໃນສະພາບບາບນັ້ນໄດ້ຕາຍໄປແລ້ວ. ແຕ່ນີ້ຕໍ່ໄປພວກເຮົາແມ່ນມະນຸດຄົນໃໝ່ໃນອົງພຣະເຢຊູເຈົ້າ. ດ້ວຍເຫດນີ້ໃຫ້ພວກເຮົາຊອກສະແຫວງແຕ່ພຣະເຢຊູເຈົ້າເທົ່ານັ້ນໃນຊີວິດຂອງພວກເຮົາ. ເພາະພຣະອົງແມ່ນຊັບສົມບັດລ້ຳຄ່າທີ່ສຸດໃນຊີວິດຂອງພວກເຮົາ.

ສ່ວນໃນພຣະວໍລະສານວັນນີ້, ພຣະເຢຊູເຈົ້າກໍກ່າວກັບຊາຍໜຸ່ມທີ່ຂໍໃຫ້ພຣະອົງຕັດສິນກ່ຽວກັບເລື່ອງແບ່ງປັນມໍລະດົກໃນຄອບຄົວຂອງເຂົາວ່າ: ຈະມີປະໂຫຍດຫຍັງຫາກເຈົ້າມີແຕ່ຄວາມຮັ່ງມີໃນໂລກນີ້ເທົ່ານັ້ນ, ແຕ່ຄວາມຮັ່ງມີໃນສະຫວັນເຈົ້າບໍ່ໄດ້ມີເລີຍ. ເພາະສິ່ງທີ່ເປັນຂອງໂລກຈະຕ້ອງສູນເສຍໄປນຳໂລກ, ສ່ວນສິ່ງທີ່ເປັນຂອງສະຫວັນຈະໝັ້ນຄົງຖາວອນແລະບໍ່ສູນເສຍເປັນເລີຍ. ແລະສິ່ງທີ່ເປັນຂອງສະຫວັນນີ້ແມ່ນພຣະອົງນັ້ນເອງ. ຜູ້ເປັນບໍ່ເກີດແຫ່ງຊີວິດແລະຄວາມດີທຸກຢ່າງ. ດ້ວຍເຫດນີ້, ຖ້າພວກເຮົາຢູ່ໃນພຣະອົງ, ພວກເຮົາກໍຈະມີຊີວິດແລະຄວາມດີທຸກຢ່າງທີ່ມາຈາກພຣະອົງ. ຍ້ອນມີແຕ່ພຣະອົງເທົ່ານັ້ນທີ່ເປັນບໍ່ເກີດແຫ່ງຊີວິດແລະຄວາມຍິນດີຂອງພວກເຮົາ.

**ພາວະນາ**

ໂອພຣະເຈົ້າ ໂຜດປະທານອົງຄວາມສະຫລາດໃຫ້ລູກດ້ວຍ, ອັນແມ່ນພຣະເຢຊູພຣະບຸດຂອງພຣະອົງ. ເພື່ອລູກຈະໄດ້ຢູ່ໃນພຣະອົງແລະພຣະອົງຢູ່ໃນລູກ. ແລະແຕ່ນີ້ຕໍ່ໄປຊີວິດຂອງລູກຈະມີແຕ່ພຣະອົງເທົ່ານັ້ນ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ